**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 9 ສິງຫາ 2026 (8-9-2026)

---

## ທັສນະຄະຕິທີ່ຖ່ອມຕົວ

**ຈຸດສຳຄັນໃນບົດຮຽນ: ຄວາມຖ່ອມຕົວຮຽກຮ້ອງສຳລັບຄວາມສັດຊື່ຕໍ່ພຣະຄຣິດ.**

**ພຣະຄັມພີຕອບສນອງຕໍ່ຊີວິດ:**

*ແມ່ນໃຜທີ່ເຈົ້າຕິດຕາມໃນຊື່ສັງຄົມ,ວິທະຍຸ ຫຼື ທີວີ ທີ່ເຈົ້າວາງໃຈເຊື່ອໄດ້ແລະແມ່ນຫຍັງທີ່ເຂົາເຮັດໃຫ້ເຈົ້າວາງໃຈໄດ້?*

ເມື່ອເຈົ້າພູມໃຈໃນຜົນງານຂອງເຈົ້າ, ເຈົ້າກໍຢາກໃຫ້ທົ່ວທັງໂລກຮູ້. ນັ້ນແມ່ນຄວາມຮູ້ສຶກຂອງພະນັກງານຄົນນຶ່ງທີ່ ປີນາໂກເທັກ ເດີ ໂມເດີນ Pinakothek der Moderne (ພິພິທພັນສິລະປະສມັຍໃໝ່). ພິພິທພັນແຫ່ງນີ້ມີຜົນງານສິລະປະຫຼາຍກວ່າ 20,000 ຊິ້ນ, ແຕ່ພະນັກງານຄົນນຶ່ງຮູ້ສຶກວ່າມີບາງສິ່ງບາງຢ່າງຂາດຫາຍໄປ. ລາວໄດ້ຮັບຄວາມສົນໃຈທີ່ລາວຕ້ອງການ, ແຕ່ຜົນສະທ້ອນແມ່ນການຖືກໄລ່ອອກທັນທີຂອງລາວ. ມັນບໍ່ຈະແຈ້ງວ່າການຖືກໄລ່ອອກແມ່ນຍ້ອນຜົນງານສິລະປະທີ່ບໍ່ດີຂອງລາວ ຫຼື ຄວາມຈິງທີ່ວ່າລາວໄດ້ເຈາະຮູຢູ່ໃນຝາເພື່ອແຂວນຮູບຄົນຂອງຕົນເອງ, ແຕ່ສິ່ງນຶ່ງທີ່ຊັດເຈນຄື: ຄວາມຖ່ອມຕົວອາດຈະຊ່ວຍລາວໃຫ້ພົ້ນຈາກຄວາມອັບອາຍ (ແລະການວ່າງງານໄດ້).[1] ເຣື່ອງລາວຂອງລາວເປັນການເຕືອນທີ່ຕລົກວ່າຄວາມອວດຕົວບໍ່ຄ່ອຍຈະນຳໄປສູ່ຈຸດຈົບທີ່ດີ. ແຕ່ສຳລັບຜູ້ທີ່ຕິດຕາມພຣະເຢຊູ, ຄວາມຖ່ອມຕົວບໍ່ພຽງແຕ່ເປັນປໂຍດເທົ່ານັ້ນ, ແຕ່ຍັງເປັນສິ່ງຈຳເປັນຢ່າງແທ້ຈິງ.

**ຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,

### <u>ສຶກສາພຣະຄັມພີ</u>

### 1. <u>1 ໂກຣິນໂທ 3:18-23</u>

*18. ຢ່າໃຫ້ຜູ້ໃດຫຼອກລໍ້ຕົນເອງ ຖ້າຜູ້ໃດໃນພວກເຈົ້າຄຶດວ່າຕົນເປັນຄົນມີປັນຍາໃນສມັຍນີ້ ຈົ່ງໃຫ້ຜູ້ນັ້ນຍອມເປັນຄົນໂງ່ ເພື່ອຈະກາຍ-*
*ເປັນຄົນມີປັນຍາໄດ້ 19. ເພາະວ່າປັນຍາຂອງໂລກນີ້ເປັນຄວາມໂງ່ຕໍ່ພຣະພັກພຣະເຈົ້າ ດ້ວຍມີຄຳຂຽນໄວ້ໃນພຣະຄັມພີວ່າ, “ພຣະອົງ*
*ຊົງຈັບຄົນທີ່ມີປັນຍາດ້ວຍອຸບາຍຂອງເຂົາເອງ” 20. ແລະມີຄຳຂຽນໄວ້ໃນພຣະຄັມພີອີກວ່າ, “ພຣະເຈົ້າຊົງຊາບວ່າ ຄວາມຄຶດຂອງຄົນ*
*ທີ່ມີປັນຍານັ້ນເປັນການເປົ່າໆ” 21. ເຫດສັນນັ້ນຢ່າໃຫ້ຜູ້ໃດຍົກມະນຸດຂຶ້ນອວດ ດ້ວຍວ່າສິ່ງສາຣະພັດເປັນຂອງເຈົ້າທັງຫລາຍແລ້ວ*
*22. ເຖິງແມ່ນວ່າໂປໂລກໍດີ ອາໂປໂລ ແລະເກຟາກໍດີ ໂລກກັບຊີວິດແລະຄວາມຕາຍກໍດີ ຫລືສິ່ງທີ່ມີໃນປັດຈຸບັນແລະອະນາຄົດກໍດີ*
*ສິ່ງສາຣະພັດນັ້ນກໍເປັນຂອງພວກເຈົ້າ 23. ແລະພວກເຈົ້າເປັນຂອງພຣະຄຣິດ ແລະພຣະຄຣິດຊົງເປັນຂອງພຣະເຈົ້າ*

ໃນຂນະທີ່ພວກເຮົາຈະສຸມໃສ່ຄວາມຖ່ອມຕົວໃນການສົນທະນານີ້, ຂ້ອຍຢາກໃຫ້ພວກເຮົາເຫັນວ່າຄຳສອນຂອງໂປໂລໃນ 1 ໂກຣິນໂທ ບົດທີ 3 ເຊື່ອມຕໍ່ໂດຍກົງກັບສິ່ງທີ່ເພິ່ນໄດ້ສອນໃນບົດທີ 1 ກ່ຽວກັບຄວາມສາມັກຄີ ແລະການເປັນຜູ້ນຳ, ແລະສິ່ງທີ່ເພິ່ນໄດ້ສອນໃນບົດທີ 2 ກ່ຽວກັບປັນຍາແນວໃດ. ເພື່ອແກ້ໄຂບັນຫາຂອງຄວາມເປັນຜູ້ນຳ ແລະຄວາມສາມັກຄີ (ບົດທີ 1), ພວກເຮົາຕ້ອງການປັນຍາ-ປັນຍາຈາກພຣະເຈົ້າ (ບົດທີ 2). ດັ່ງນັ້ນ, ເມື່ອພວກເຮົາເບິ່ງສິ່ງຕ່າງໆຢ່າງສະຫຼາດຈາກທັສນະຂອງພຣະເຈົ້າ, ພວກເຮົາຕອບສນອງດ້ວຍການຮັບໃຊ້ທີ່ຖ່ອມຕົວ. ແຕ່ໜ້າເສັຽດາຍ, ພວກເຮົາມັກຈະບໍ່ສາມາດດຳເນີນຊີວິດຢູ່ໃນໂບດດ້ວຍປັນຍາທີ່ຖືກຕ້ອງ. ໂບດມັກຈະຕິດຢູ່ໃນຄວາມຄິດແບບທຸລະກິດ, ບໍ່ວ່າຈະເປັນການໃຊ້ຕຳແຫນ່ງ ຫຼືຍຸດທະສາດທີ່ຟັງຄືກັບບໍລິສັດ. <u>ແຕ່ໂບດຂອງພຣະເຈົ້າບໍ່ໄດ້ເຕີບໃຫຍ່ຜ່ານຊື່ສຽງ, ສະງ່າຣາສີ, ຫຼື ເວທີທີ່ໂດດເດັ່ນ; ມັນເຕີບໃຫຍ່ຜ່ານການອະທິຖານ, ການເສັຽສຣະ, ຄວາມຖ່ອມຕົວ, ແລະຄວາມຮັກ</u>. ພວກເຮົາຈຳເປັນຕ້ອງເຂົ້າຫາມັນດ້ວຍສາຍຕາອັນແຫຼມຄົມຂອງປັນຍາທີ່ມາຈາກພຣະວິນຍານບໍຣິສຸດ. ພວກເຮົາໄດ້ຮັບປັນຍານັ້ນເມື່ອພວກເຮົາຖ່ອມຕົວລົງຕໍ່ໜ້າພຣະເຈົ້າ, "ປ່ອຍໃຫ້ພວກເຂົາໂງ່, ເພື່ອວ່າພວກເຂົາຈະກາຍເປັນຄົນສລາດ" (ຂໍ້ 18) ໂປໂລ

ໄດ້ຢືນຢັນຄຳສອນນີ້ໃນບົດທີ 2, ໂດຍບອກພວກເຮົາວ່າພວກເຮົາອາດຈະເບິ່ງຄືວ່າໂງ່ໃນສາຍຕາຂອງໂລກ, ແຕ່ປັນຍາທີ່ແທ້ຈິງມາຈາກພຣະເຈົ້າ. ເມື່ອໂຢບ, ພໍ່ຕູ້ໃນພຣະຄັມພີເດີມ, ໄດ້ທົນທຸກທໍຣະມານຢ່າງໜັກ, ເອລີຟາດແມ່ນເພື່ອນຄົນນຶ່ງຂອງລາວທີ່ນັ່ງຢູ່ກັບລາວແລະສເນີຄວາມຄິດເຫັນຂອງລາວ. ເມື່ອໂປໂລອ້າງເຖິງເອລີຟາດຈາກໂຢບ 5:13, ເຊິ່ງກ່າວວ່າ, "ພຣະອົງຈັບຄົນສລາດດ້ວຍເລ້ຫຼ່ຽມຂອງເຂົາເຈົ້າເອງ," ໂປໂລເຕືອນພວກເຮົາວ່າປັນຍາຂອງໂລກສາມາດເຮັດໃຫ້ພວກເຮົາຕາບອດໄດ້. ພວກເຮົາສາມາດໄດ້ຮັບປັນຍາທີ່ແທ້ຈິງເມື່ອພວກເຮົາຖ່ອມຕົວລົງຕໍ່ໜ້າພຣະເຈົ້າ. ໂປໂລນຳເອົາບົດສລຸບນີ້ກັບຄືນສູ່ບັນຫາການນຳພາຂອງຄຣິສຕະຈັກ. "ທຸກສິ່ງທຸກຢ່າງເປັນຂອງເຈົ້າ" (1 ໂກຣິນໂທ 3:21-22). ເມື່ອພວກເຮົາເຕີບໃຫຍ່ຂຶ້ນໃນປັນຍາທາງວິນຍານ, ພວກເຮົາເຫັນມໍລະດົກອັນລ້ຳຄ່າທີ່ພວກເຮົາມີໃນພຣະຄຣິດ. ທຸກສິ່ງທຸກຢ່າງເປັນຂອງພຣະຄຣິດ, ແລະພຣະອົງແບ່ງປັນພວກມັນເປັນມໍລະດົກກັບລູກໆຂອງພຣະອົງ (ເອເຟໂຊ 1:11-14). ພວກເຮົາອາດຈະຄິດເຖິງສິ່ງເຫຼົ່ານີ້ໃນແງ່ຂອງ "ພຣະພອນທຸກປະການຝ່າຍວິນຍານ"(ຂໍ້ 3) ແລະຂອງປະທານທາງວິນຍານທີ່ພຣະອົງປະທານໃຫ້ແກ່ຄຣິສຕະຈັກ. ແຕ່ໂປໂລຍັງລວມເຖິງຜູ້ນຳເຊັ່ນເປໂຕ, ອາໂປໂລ, ແລະຕົວລາວເອງ. ຜູ້ນຳເຫຼົ່ານີ້ຍັງເປັນຂອງຄຣິສຕະຈັກ. ດັ່ງນັ້ນ, ບໍ່ມີເຫດຜົນທີ່ຈະເກີດຄວາມແບ່ງແຍກພາຍໃນຄອບຄົວຄຣິສຕະຈັກ. ແຕ່ໂປໂລບໍ່ໄດ້ຢຸດຢູ່ທີ່ນັ້ນ: "ໂລກກັບຊີວິດແລະຄວາມຕາຍກໍດີ ຫຼືສິ່ງທີ່ມີໃນປັດຈຸບັນແລະອານາຄົດກໍດີ ສິ່ງສາຣະພັດນັ້ນກໍເປັນຂອງພວກເຈົ້າ" (1 ໂກຣິນໂທ 3:22). ເຫດຜົນທີ່ສິ່ງເຫຼົ່ານີ້ເປັນຂອງພວກເຮົາແມ່ນຍ້ອນວ່າພວກເຮົາເປັນຂອງພຣະຄຣິດ, ຜູ້ທີ່ເປັນພຣະຜູ້ເປັນເຈົ້າເໜືອທຸກສິ່ງທຸກຢ່າງ. ໂປໂລເນັ້ນໜັກເລື່ອງນີ້ອີກຄັ້ງໃນ 1 ໂກຣິນໂທ 15:27: "ເພາະວ່າພຣະເຈົ້າໄດ້ວາງທຸກສິ່ງທຸກຢ່າງໄວ້ໃຕ້ຕີນຂອງພຣະອົງ." ການເປັນເຈົ້າຂອງພຣະຄຣິດຂອງພວກເຮົາເຮັດໃຫ້ພວກເຮົາມີສ່ວນແບ່ງໃນທຸກສິ່ງທີ່ຢູ່ໃຕ້ຕີນຂອງພຣະອົງເຊັ່ນກັນ. ໂປໂລກ່າວວ່າພວກເຮົາບໍ່ມີເຫດຜົນທີ່ຈະອວດອ້າງຜູ້ນຳມະນຸດ, ແລະເນື່ອງຈາກທຸກສິ່ງທຸກຢ່າງເປັນຂອງພວກເຮົາໃນພຣະຄຣິດ, ພວກເຮົາຈຶ່ງບໍ່ມີເຫດຜົນທີ່ຈະອວດອ້າງເຖິງສິ່ງໃດເລີຍ. ບໍ່ມີບ່ອນຫວ່າງສຳລັບການອວດອ້າງຄວາມຊອບທັມຂອງຕົນເອງ, ເຖິງແມ່ນວ່າບໍ່ມີໃຜອ້າງມັນໂດຍເຈດຕະນາກໍຕາມ. ຍິ່ງພວກເຮົາເປັນຄຣິສຕຽນດົນເທົ່າໃດ, ມັນກໍຈະງ່າຍຂຶ້ນສຳລັບພວກເຮົາທີ່ຈະເຫັນສິ່ງດີໆເປັນຂອງຕົນເອງ, ແທນທີ່ຈະເຫັນພວກມັນເປັນວຽກງານຂອງພຣະຄຣິດໃນພວກເຮົາ. ຍິ່ງພວກເຮົາເປັນຄຣິສະຕຽນດົນເທົ່າໃດ, ພວກເຮົາກໍຍິ່ງຫຼົງທາງຈາກຊີວິດເກົ່າທີ່ບໍ່ມີພຣະຄຣິດ, ຈົນເຖິງຈຸດທີ່ພວກເຮົາອາດຈະລືມວ່າພຣະຄຣິດໄດ້ນຳພາພວກເຮົາໄປໄກປານໃດ. ພວກເຮົາອາດຈະກາຍເປັນຄືກັບພວກຟາຣີຊາຍຜູ້ທີ່ອະທິຖານວ່າ, "ພຣະເຈົ້າ, ຂ້ານ້ອຍຂໍຂອບພຣະຄຸນພຣະອົງທີ່ຂ້ານ້ອຍບໍ່ຄືກັບຄົນອື່ນ-ທັງບໍ່ໂລບ, ບໍ່ຊອບທັມ, ເປັນຄົນຫຼິ້ນຊູ້, ຫຼືແມ່ນແຕ່ຄົນເກັບພາສີຄົນນີ້" (ລູກາ 18:11). ຄຳເວົ້າຂອງໂປໂລເຕືອນພວກເຮົາວ່າທຸກສິ່ງທີ່ພວກເຮົາມີແມ່ນຍ້ອນພຣະຄຣິດ; ດັ່ງນັ້ນ, ພວກເຮົາບໍ່ມີບ່ອນຫວ່າງທີ່ຈະອວດອ້າງຄວາມຊອບທັມຂອງຕົນເອງໃນສິ່ງໃດ.

*ຕົວຢ່າງບາງຢ່າງທີ່ສະແດງໃຫ້ເຫັນວ່າຄົນໃນວັທນະທັມຂອງພວກເຮົາຫຼອກລວງຕົນເອງແມ່ນຫຍັງ?*

## 2. 1 ໂກຣິນໂທ 4:1-5

*1. ໃຫ້ທຸກຄົນຖືວ່າພວກເຮົາເປັນຜູ້ຮັບໃຊ້ຂອງພຣະຄຣິດ ທັງເປັນຜູ້ປ້ອງກັນຮັກສາຂໍ້ເລິກລັບຂອງພຣະເຈົ້າ 2. ປະການນຶ່ງ, ຜູ້ປ້ອງກັນຮັກສານັ້ນຈຳເປັນຕ້ອງເປັນຄົນສັດຊື່ 3. ສຳລັບເຮົາ ການທີ່ເຈົ້າທັງຫຼາຍຫຼືມະນຸດຜູ້ໃດຈະຕັດສິນຕົວເຮົານັ້ນ ເຮົາເຫັນວ່າເປັນເລື່ອງເລັກນ້ອຍ ເຖິງແມ່ນເຮົາເອງກໍບໍ່ໄດ້ຕັດສິນຕົວເຮົາ 4. ເພາະເຮົາບໍ່ຮູ້ວ່າເຮົາມີຜິດສິ່ງໃດ ເຖິງປານນັ້ນເຮົາກໍບໍ່ພົ້ນຈາກການພິພາກສາ ແຕ່ຜູ້ພິພາກສາຕົວເຮົານັ້ນແມ່ນອົງພຣະຜູ້ເປັນເຈົ້າ 5. ເຫດສັນນັ້ນພວກເຈົ້າຢ່າຕັດສິນສິ່ງໃດກ່ອນເວລາ ຈົນກວ່າອົງພຣະຜູ້ເປັນເຈົ້າຈະສະເດັດມາ ພຣະອົງຈະຊົງເປີດເຜີຍຄວາມລັບທີ່ເຊື່ອງໄວ້ໃນຄວາມມືດໃຫ້ແຈ່ມແຈ້ງ ແລະຈະຊົງເຜີຍຄວາມຄາດໝາຍໃນໃຈມະນຸດດ້ວຍ ເມື່ອນັ້ນແຫຼະ, ທຸກຄົນຈະໄດ້ຮັບຄຳຊົມເຊີຍຈາກພຣະເຈົ້າຕາມສົມຄວນ*

ດັ່ງນັ້ນ ໂປໂລຢາກໃຫ້ຄຣິສຕະຈັກເບິ່ງລາວ ແລະ ຜູ້ນຳຄົນອື່ນໆແນວໃດ? ຄຳຕອບແມ່ນ "ໃນຖານະຜູ້ຮັບໃຊ້ຂອງພຣະຄຣິດ ແລະຜູ້ດູແລຄວາມລຶກລັບຂອງພຣະເຈົ້າ" (ຂໍ້ທີ 1). ຄຳພາສາ ກຣີກ ທີ່ໂປໂລໃຊ້ສຳລັບ "ຜູ້ຮັບໃຊ້" ໃນທີ່ນີ້ໝາຍເຖິງ "ຜູ້ພາຍເຮືອ", ຊຶ່ງເຮັດໃຫ້ຄິດເຖິງຮູບພາບຂອງທາດທີ່ນັ່ງຢູ່ໃນໂຄງເຮືອໂຣມັນ. ບໍ່ມີທາດຄົນໃດມີອຳນາດໃນການຊີ້ນຳເຮືອ; ແຕ່ລະຄົນຕ້ອງຢູ່ໄຕ້ຄຳສັ່ງ: ພາຍເຮືອ. ຜູ້ນຳເຫຼົ່ານີ້ຍັງເປັນ "ຜູ້ດູແລ", ເຊິ່ງເປັນບົດບາດທີ່ອາດເບິ່ງຄືວ່າສຳຄັນໜ້ອຍນຶ່ງກວ່າຜູ້ພາຍເຮືອ, ແຕ່ຂ້ອຍເຫັນໂປໂລໃຊ້

ຄຳນີ້ເພື່ອເນັ້ນໜັກເຖິງຄວາມຮັບຜິດຊອບ ແລະໜ້າທີ່ຂອງຜູ້ທີ່ຄຸ້ມຄອງຊັບສິນຂອງຄົນອື່ນ. ຜູ້ພາຍເຮືອບໍ່ໄດ້ຄຸ້ມຄອງຕາມທີ່ເຂົາເຈົ້າຕ້ອງການ, ແຕ່ຕ້ອງປະຕິບັດຕາມຄຳສັ່ງແລະ ຄວາມຕັ້ງໃຈຂອງນາຍຈ້າງຂອງເຂົາເຈົ້າ. ນີ້ແມ່ນຕຳແໜ່ງທີ່ຕ້ອງການຄວາມໄວ້ວາງໃຈ; ດັ່ງນັ້ນຄວາມສັດຊື່ຈຶ່ງເປັນກຸນແຈທີ່ສຳຄັນຕໍ່ຜູ້ຈັດການທີ່ດີ: ຄວາມສັດຊື່ຕໍ່ໜ້າທີ່ຂອງຕົນ ແລະສັດຊື່ຕໍ່ຜູ້ເປັນເຈົ້າຂອງ. ໃນພຣະຄັມພີ, ຄຳວ່າ "ຄວາມລຶກລັບ" ບໍ່ແມ່ນປຣິສນາທີ່ຕ້ອງຫາຄຳຕອບ, ແຕ່ເປັນຄວາມຈິງທີ່ເຄີຍຖືກປິດບັງໄວ້ ແລະປັດຈຸບັນໄດ້ຖືກເປີດເຜີຍໂດຍພຣະວິນຍານ. ຄວາມລຶກລັບທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະເຈົ້າໄດ້ເປີດເຜີຍແມ່ນພຣະຄຣິດເອງ-ຂ່າວປະເສີດຂອງພຣະອົງ, ຄຣິສຕະຈັກຂອງພຣະອົງ, ແລະອານາຈັກຂອງພຣະອົງ. ດັ່ງທີ່ໂປໂລໄດ້ກ່າວກັບຄຣິສຕະຈັກໃນເມືອງໂກໂລຊາຍວ່າ: ເຮົາໄດ້ຮັບມອບໝາຍຈາກພຣະເຈົ້າໃຫ້ຮັບໃຊ້ພຣະຄຳຂອງພຣະອົງແກ່ທ່ານ, ເພື່ອເຮັດສຳເລັດຄວາມລຶກລັບທີ່ຖືກເຊື່ອງໄວ້ຕລອດຍຸກສມັຍ ແຕ່ປັດຈຸບັນໄດ້ຖືກເປີດເຜີຍຕໍ່ໄພ່ພົນຂອງພຣະອົງ (ໂກໂລຊາຍ 1:25-26). ຄວາມລຶກລັບອັນມະຫັສຈັນທີ່ພຣະເຈົ້າປາຖນາໃຫ້ພວກເຮົາເຫັນແມ່ນພົບຢູ່ໃນພຣະຄຳຂອງພຣະອົງ, ຂ່າວປະເສີດຂອງພຣະຄຣິດ. ພາລະກິດຂອງໂປໂລແມ່ນເພື່ອສັດຊື່ໃນໜ້າທີ່ການຄຸ້ມຄອງຂອງລາວແລະລາວໄດ້ຖ່າຍທອດຂ່າວປະເສີດຂອງພຣະຄຣິດ. ທຸກຢ່າງແມ່ນກ່ຽວກັບພຣະເຢຊູ, ກ່ຽວກັບຂ່າວປະເສີດແຫ່ງຄວາມລອດຂອງພຣະອົງ. ໂປໂລຕ້ອງຮັບຜິດຊອບຕໍ່ພຣະເຈົ້າ-ແລະຕໍ່ພຣະເຈົ້າເທົ່ານັ້ນ-ສຳລັບວຽກງານນີ້. ພຣະເຈົ້າໄດ້ມອບໝາຍໜ້າທີ່ນີ້ໃຫ້ລາວ, ແລະພຣະອົງເປັນພຣະຜູ້ເປັນເຈົ້າອົງດຽວຂອງລາວ. ດັ່ງນັ້ນ, ລາວຈຶ່ງກ່າວວ່າ, “ສຳລັບເຮົາ ການທີ່ເຈົ້າທັງຫຼາຍຫຼືມະນຸດຜູ້ໃດຈະຕັດສິນຕົວເຮົານັ້ນ ເຮົາເຫັນວ່າເປັນເຣື່ອງເລັກນ້ອຍ ເຖິງແມ່ນເຮົາເອງກໍບໍ່ໄດ້ຕັດສິນຕົວເຮົາ” (1 ໂກຣິນໂທ 4:3). ໂປໂລບໍ່ໄດ້ຖືວ່າການຕັດສິນຂອງຕົນເອງເປັນສິ່ງສຳຄັນທີ່ສຸດ. “ເຖິງແມ່ນເຮົາເອງກໍບໍ່ໄດ້ຕັດສິນຕົວເຮົາ.” ຄຳເວົ້າເຫຼົ່ານີ້ບໍ່ໄດ້ເວົ້າອອກມາຈາກຄວາມຈອງຫອງ, ແຕ່ໂປໂລຮັບຮູ້ວ່າການຕັດສິນຂອງຕົນເອງອາດຈະຜິດ. ຕໍ່ມາລາວໄດ້ກ່າວກັບຄຣິສຕະຈັກໃນເມືອງໂກຣິນໂທວ່າ, “ຈົ່ງທົດສອບຕົນເອງເບິ່ງວ່າທ່ານຍັງຢູ່ໃນຄວາມເຊື່ອຫຼືບໍ່.” “ຈົ່ງກວດສອບຕົນເອງ” (2 ໂກຣິນໂທ 13:5). ພວກເຮົາຄວນວາງໃຈແລະແຮງຈູງໃຈຂອງພວກເຮົາໄວ້ຕໍ່ໜ້າພຣະຜູ້ເປັນເຈົ້າສເມີ, ແລະພວກເຮົາຕ້ອງເພິ່ງພາພຣະວິນຍານຂອງພຣະອົງ ເພື່ອເຕືອນພວກເຮົາເມື່ອຈຳເປັນ ແລະນຳພາພວກເຮົາເພື່ອເບິ່ງວ່າພວກເຮົາຢືນຢູ່ໃສຕໍ່ໜ້າພຣະອົງ, ສິ່ງສຳຄັນແມ່ນການປະຕິບັດຕາມຕົວຢ່າງຂອງດາວິດໂດຍການຂໍໃຫ້ພຣະຜູ້ເປັນເຈົ້ານຳພາການກວດສອບ, ເຊັ່ນດຽວກັບໃນຄຳອະທິຖານ: “ຂໍຊົງຄົ້ນເບິ່ງຂ້ານ້ອຍ, ພຣະຜູ້ເປັນເຈົ້າ, ແລະຊົງຮູ້ຫົວໃຈຂອງຂ້ານ້ອຍ; ຊົງທົດສອບຂ້ານ້ອຍ ແລະ ຊົງຮູ້ຄວາມກັງວົນຂອງຂ້ານ້ອຍ; ຊົງເບິ່ງວ່າມີທາງຊົ່ວໃດໆໃນຂ້ານ້ອຍ, ແລະຊົງນຳຂ້ານ້ອຍໄປໃນເສັ້ນທາງນິລັນດອນ” (ເພງສັຣເສີນ 139:23-24). ໂປໂລເອງບໍ່ໄດ້ຕໍ່ຕ້ານການພິພາກສາໃນຮູບແບບໃດໆ. ດັ່ງນັ້ນ ການຕັດສິນຂອງພວກເຮົາໃນຖານະຜູ້ທີ່ເຊື່ອແມ່ນເລີ່ມຕົ້ນແລະຈົບລົງຢູ່ໃສ? ພວກເຮົາຕ້ອງຮັບຜິດຊອບເຊິ່ງກັນແລະກັນໃນເຣື່ອງທີ່ໄດ້ກ່າວໄວ້ຢ່າງຈະແຈ້ງໃນພຣະຄັມພີ. ສິ່ງໃດກໍຕາມທີ່ນອກເໜືອໄປຈາກນັ້ນແມ່ນອີງໃສ່ການສົມມຸດເອົາ ແລະຄວາມມັກຂອງພວກເຮົາເອງ. ພວກເຮົາບໍ່ສາມາດຮູ້ຫົວໃຈ ຫຼື ແຮງຈູງໃຈຂອງຄົນອື່ນໄດ້ຢ່າງເຕັມທີ່, ແຕ່ພຣະເຈົ້າຮູ້. ເມື່ອພຣະຄຣິດກັບຄືນມາ, ພຣະອົງຈະເປີດເຜີຍສິ່ງເຫຼົ່ານີ້. ສິ່ງທີ່ເຊື່ອງໄວ້ໃນຕອນນີ້ຈະຖືກເປີດເຜີຍໂດຍພຣະຄຣິດ. ໃນລະຫວ່າງນີ້, ໃຫ້ພວກເຮົາສຸມໃສ່ການປະຕິບັດພາລະກິດຂອງຕົນເອງ ແລະ ຮັບໃຊ້ຢ່າງສັດຊື່ໃນບ່ອນທີ່ພຣະເຈົ້າໄດ້ວາງພວກເຮົາໄວ້.

*ຄຸນລັກສນະຂອງຜູ້ດູແລຄວາມລຶກລັບຂອງພຣະເຈົ້າແມ່ນຫຍັງ?*

## 3. 1 ໂກຣິນໂທ 4:6-7

*6. ພີ່ນ້ອງທັງຫຼາຍເອີຍ, ທີ່ເຮົາໄດ້ນຳເອົາເຣື່ອງຕົວເຮົາກັບເຣື່ອງອາໂປໂລມາກ່າວໄວ້ ກໍເພື່ອປໂຍດຂອງເຈົ້າທັງຫຼາຍ ເພື່ອໃຫ້ພວກເຈົ້າຮຽນເອົາຕາມແບບຢ່າງຂອງພວກເຮົາຄື “ຢ່າອອກນອກຂອບເຂດຂອງພຣະຄັມພີ” ບໍ່ໃຫ້ຜູ້ໃດໃນພວກເຈົ້າມີໃຈຈອງຫອງຍົກຜູ້ນຶ່ງແລະຂົ່ມຜູ້ນຶ່ງ 7. ຜູ້ໃດໄດ້ເຮັດໃຫ້ເຈົ້າຕ່າງກັນກັບຄົນອື່ນ ຫຼືມີອັນໃດທີ່ເຈົ້າບໍ່ໄດ້ຮັບມາ ຖ້າເຈົ້າໄດ້ຮັບແລ້ວ ເປັນຫຍັງເຈົ້າຈຶ່ງໂອ້ອວດເໝືອນກັບເຈົາບໍ່ໄດ້ຮັບເລີຍ*

ຕລອດການເທສນາຂອງໂປໂລກ່ຽວກັບຄວາມເປັນຜູ້ນຳ, ສະຕິປັນຍາ, ແລະບົດບາດຂອງການເປັນຜູ້ຮັບໃຊ້ຂອງພຣະຄຣິດ, ລາວໄດ້ນຳໃຊ້ຄວາມເຂົ້າໃຈຂອງລາວບົດບາດຂອງອາໂປໂລໃນໂບດ, ຢ່າງໃດກໍຕາມ, ການນຳໃຊ້ດັ່ງກ່າວສາມາດນຳໃຊ້ກັບພວກເຮົາທຸກຄົນ,

ບໍ່ວ່າພວກເຮົາຈະມີບົດບາດແນວໃດໃນໂບດ, ບໍ່ວ່າພວກເຮົາຈະເປັນສິດຍາພິບານໂບດ ຫຼືເຮັດວຽກຢ່າງງຽບໆຢູ່ເບື້ອງຫຼັງ, ພວກເຮົາທຸກຄົນຕ້ອງນຳໃຊ້ຫຼັກການຂອງປັນຍາທີ່ເຕັມໄປດ້ວຍວິນຍານ ແລະ ຫົວໃຈຂອງຜູ້ຮັບໃຊ້ທີ່ສັດຊື່ ແລະຖ່ອມຕົວໃນຊີວິດຂອງພວກເຮົາ. ສິ່ງນີ້ຮຽກຮ້ອງໃຫ້ພວກເຮົາເອົາໃຈໃສ່ຄົນອື່ນ ແລະດຳເນີນຊີວິດຕາມພຣະຄຳຂອງພຣະເຈົ້າ, ໂດຍຍຶດໝັ້ນຫຼັກການຂອງ "ຢ່າອອກນອກຂອບເຂດຂອງພຣະຄຳພີ" (ຂໍ້ 6). ພວກເຮົາຕ້ອງດຳເນີນຊີວິດ ແລະຕັດສິນສິ່ງຕ່າງໆໂດຍອີງໃສ່ພຣະຄຳຂອງພຣະເຈົ້າເທົ່ານັ້ນ. ພວກເຮົາມັກສົມມຸດວ່າທັສນະຂອງພວກເຮົາຖືກຕ້ອງ, ໂດຍບໍ່ຮູ້ວ່າພວກເຮົາກຳລັງກັ່ນຕອງຄວາມຈິງຜ່ານຄວາມມັກ ແລະທັສນະຄະຕິສ່ວນຕົວຂອງພວກເຮົາ. ເຈົ້າອາດຈະ "ນະມັສການ" ທັສນະໂລກຂອງຕົນເອງ ເພາະວ່າເຈົ້າເຊື່ອວ່າວິທີການເບິ່ງສິ່ງຕ່າງໆຂອງເຈົ້າແມ່ນດີທີ່ສຸດ. (ຫຼື ວິທີດຽວທີ່ຖືກຕ້ອງທີ່ຈະເວົ້າມັນ) ຄືດວ່າ, "ຂ້ອຍຖືກ, ເຈົ້າຜິດ." ພວກເຮົາເຫັນສິ່ງນີ້ໃນການເມືອງ, ໃນທິສດີສົນຮູ້ຮ່ວມຄິດ, ແລະຢ່າງໜ້າເສົ້າຍດາຍ, ໃນຊີວິດຂອງໂບດເຊັ່ນກັນ. ພວກເຮົາມັກອ່ານພຣະຄຳພີໂດຍອີງໃສ່ສິ່ງທີ່ພວກເຮົາຄິດວ່າດີທີ່ສຸດໃນສະຖານະການທີ່ກຳນົດໃຫ້ ມີເວລານຶ່ງທີ່ພວກເຮົາຄວນເບິ່ງສະຖານະການຕ່າງໆຜ່ານທັສນະຂອງພຣະຄຳພີເທົ່ານັ້ນ. ເມື່ອພວກເຮົາປູກຝັງນິສັຍການປະເມີນຄົນ, ຄວາມຄິດ, ແລະສະຖານະການຕ່າງໆຕາມປັນຍາຂອງພຣະຄຳຂອງພຣະເຈົ້າ, ພວກເຮົາຈະມີ "ຈິດໃຈຂອງພຣະຄຣິດ," ດັ່ງທີ່ໂປໂລກ່າວໃນ 1 ໂກຣິນໂທ 2:16. ສິ່ງນີ້ຈະຊ່ວຍປ້ອງກັນພວກເຮົາຈາກຄວາມຈອງຫອງ. ໃນສະພາບການຂອງໂປໂລ, ການສຸມໃສ່ພຣະຄຳຂອງພຣະເຈົ້າປ້ອງກັນບໍ່ໃຫ້ພວກເຂົາ "ຍົກຍ້ອງຄົນນຶ່ງເໜືອຄົນອື່ນ" (1 ກຣທ. 4:6). ການບໍ່ຍົກຍ້ອງຄົນນຶ່ງເໜືອຄົນອື່ນຍັງໝາຍຄວາມວ່າບໍ່ຍົກຍ້ອງຕົວເອງເໜືອຄົນອື່ນ! ພວກເຮົາເປັນໄພ່ພົນຂອງພຣະເຈົ້າ; ພຣະເຈົ້າໄດ້ເອີ້ນພວກເຮົາ, ພຣະເຈົ້າໄດ້ປະທານປັນຍາໃຫ້ພວກເຮົາ, ແລະພຣະເຈົ້າໄດ້ປະທານອຳນາດໃຫ້ພວກເຮົາ. ໃນໂບດຂອງພຣະຄຣິດ, ບໍ່ມີບ່ອນຫວ່າງສຳລັບຄວາມອວດດີ, ມີພຽງແຕ່ຄວາມຖ່ອມຕົວເທົ່ານັ້ນ. ພວກເຮົາບໍ່ແມ່ນຜູ້ອອກແບບບົດບາດຂອງພວກເຮົາ; ພວກເຮົາເປັນຜູ້ຮັບໃຊ້, ຜູ້ດູແລ, ແລະຜູ້ພາຍເຮືອ ພາຍໃຕ້ການບັນຊາຂອງພຣະອົງ.

*ການສຸມໃສ່ການປະຕິບັດພາລະກິດຮັບໃຊ້ທີ່ພຣະເຈົ້າໄດ້ເອີ້ນເຮົາໃຫ້ເຮັດ ຊ່ວຍໃຫ້ຜູ້ເຊື່ອຮັກສາຄວາມຖ່ອມຕົວໄດ້ແນວໃດ?*

ຜູ້ຕິດຕາມພຣະເຢຊູຖືກເອີ້ນໃຫ້ປະຖິ້ມຄວາມຍິ່ງຍະໂສຂອງເຂົາເຈົ້າ ແລະຮັບໃຊ້ດ້ວຍຄວາມຖ່ອມຕົວ. ບໍ່ວ່າພວກເຮົາຈະມີຄວາມສາມາດຫຼາຍປານໃດກໍຕາມ, ພວກເຮົາຖືກເອີ້ນໃຫ້ຮັບໃຊ້ໃນການປະຕິບັດໜ້າທີ່ແຫ່ງອິສຣະພາບໃນພຣະຄຣິດ. ນີ້ບໍ່ແມ່ນກ່ຽວກັບພວກເຮົາ, ແຕ່ກ່ຽວກັບພຣະເຢຊູ. ບໍ່ວ່າບົດບາດຂອງພວກເຮົາໃນອານາຈັກຂອງພຣະເຈົ້າຈະເປັນແນວໃດກໍຕາມ, ໃຫ້ພວກເຮົາປະຕິບັດໜ້າທີ່ຂອງພວກເຮົາຢ່າງສັດຊື່ ແລະຖ່ອມຕົວໃນຖານະຜູ້ຮັບໃຊ້ຂອງພຣະຄຣິດ.

*ເປັນຫຍັງພວກເຮົາຈຶ່ງມັກອ້າງເອົາຄວາມດີຄວາມຊອບສຳລັບວຽກງານຂອງພຣະເຈົ້າສຳລັບຕົວເຮົາເອງ?*

## ນຳໃຊ້ໃນຊີວິດ

ເຈົ້າສາມາດຕອບສນອງຕໍ່ການຮຽກຮ້ອງຂອງພຣະເຈົ້າໃຫ້ຮັບໃຊ້ດ້ວຍຄວາມຖ່ອມຕົວ ແລະສັດຊື່ໄດ້ແນວໃດ? ເລືອກນຶ່ງວິທີຕໍ່ໄປນີ້:

**ປະເມີນຜົນ.** ກວດສອບຫົວໃຈຂອງເຈົ້າສຳລັບຄວາມອວດຕົວ ຫຼືການທົດລອງທີ່ຈະໂອ້ອວດ. ຂອບພຣະຄຸນພຣະເຈົ້າສຳລັບຂອງປະທານທີ່ພຣະອົງໄດ້ມອບໝາຍໃຫ້ເຈົ້າ, ແຕ່ຖ້າຄວາມອວດຕົວເຂົ້າມາ, ຈົ່ງສາລະພາບມັນ.

**ໜູນໃຈ.** ຊອກຫາພວກທີ່ຮັບໃຊ້ຢູ່ເບື້ອງຫຼັງ-ຜູ້ໃຫ້ບໍລິການດູແລເດັກ, ເພື່ອຂອບໃຈສຳລັບການຮັບໃຊ້ທີ່ສັດຊື່ຂອງເຂົາເຈົ້າ.

**ຮັບໃຊ້.** ຖ້າເຈົ້າຍັງບໍ່ທັນໄດ້ເຂົ້າຮ່ວມໃນການຮັບໃຊ້ຜ່ານໂບດ, ຕອນນີ້ແມ່ນເວລາທີ່ຈະເລີ່ມຕົ້ນ. ຖາມຜູ້ນຳໂບດຂອງເຈົ້າວ່າເຈົ້າສາມາດຊ່ວຍດ້ານໃດໄດ້ແດ່, ແລະ ຈາກນັ້ນເຮັດດ້ວຍຄວາມຖ່ອມຕົວ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສຳພັນ** https://ulsb.org/sunday-school-2/ **ແປໂດຍ PA**